**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ແຂວງຈຳປາສັກ

ພະແນກໂຍທາທິການ ແລະ ຂົນສົ່ງ ເລກທີ: 4653 /ຍທຂ.

ແຂວງຈຳປາສັກ, ວັນທີ: 23 ກໍລະກົດ 2026

# ໜັງສືເຊີນເຂົ້າຮ່ວມປະຊຸມ

**ເຖິງ:** ບັນດາບໍລິສັດ ທີ່ດຳເນີນທຸລະກິດການກໍ່ສ້າງ ແລະ ສ້ອມແປງຂົວທາງ ທີ່ນັບຖື.

**ເລື່ອງ:** ເຊີນເຂົ້າຮ່ວມການປະຊຸມ ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດ ແລະ ຍົກລະດັບ-ສ້ອມແປງທາງຫຼວງທ້ອງຖິ່ນ ປະຈຳປີ 2026.

- ອີງຕາມ ກົດໝາຍວ່າດ້ວຍ ການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017;
- ອີງຕາມ ຂໍ້ຕົກລົງຂອງເຈົ້າແຂວງຈຳປາສັກ ສະບັບເລກທີ 357/ຈຂ.ຈສ, ລົງວັນທີ 23 ມີນາ 2023 ວ່າດ້ວຍ ການຈັດຕັ້ງ ແລະ ການເຄື່ອນໄຫວຂອງພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ;
- ອີງຕາມ ໜັງສືແຈ້ງການຂອງຫ້ອງວ່າການແຂວງຈຳປາສັກ ສະບັບເລກທີ 737/ຫວຂ, ລົງວັນທີ 23/7/2026 ວ່າດ້ວຍການແຈ້ງທິດຊີ້ນຳ ກ່ຽວກັບການຮັບຮອງ ການຈັດຕັ້ງປະຕິບັດ ການຈັດສັນແຜນການລົງທຶນຂອງລັດ ປະຈຳປີ 2026.

ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ ແຈ້ງມາຍັງທ່ານຊາບວ່າ: ໃນປີ 2026 ພະແນກ ໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ ໄດ້ຮັບງົບປະມານບ້ວງກອງທຶນທາງຈຳນວນໜຶ່ງ, ເຊິ່ງໄດ້ຈັດສັນເຂົ້າໃສ່ ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດ ພາຍໃນແຂວງ ແລະ ວຽກຍົກລະດັບ-ສ້ອມແປງເສັ້ນທາງຫຼວງທ້ອງຖິ່ນ, ມີລະອຽດດັ່ງລຸ່ມນີ້:

**1.) ວຽກບູລະນະຮັກສາ ແລະ ສ້ອມແປງທາງຫຼວງແຫ່ງຊາດ ປະກອບມີ 08 ຊ່ວງສັນຍາ ຄື:**

1.1- ສັນຍາ CPS01-2026-RM-PM16-NR01, ຕາມເສັ້ນທາງເລກທີ 13 ໃຕ້ ແຕ່ບ້ານນາລ່ານ ຊ/ດ ສາລະວັນ ເມືອງຊະນະສົມບູນ-ບ້ານຫຼັກ 14 ເມືອງບາຈຽງຈະເລີນສຸກ (ກມ 623+000-ກມ 682+000).

1.2- ສັນຍາ CPS02-2026-RM-PM16-NR02, ຕາມເສັ້ນທາງເລກທີ 13 ໃຕ້ ແຕ່ບ້ານຫຼັກ 14 ເມືອງບາຈຽງຈະເລີນສຸກ-ບ້ານນາຝັ່ງ ເມືອງໂຂງ (ກມ 682+000-ກມ 751+000).

1.3- ສັນຍາ CPS03-2026-RM-PM16-NR03, ຕາມເສັ້ນທາງເລກທີ 13 ໃຕ້ ແຕ່ບ້ານນາຝັ່ງ-ດ່ານສາກົນໜອງນົກຂຽນ ເມືອງໂຂງ (ກມ 751+000-ກມ 824+000).

1.4- ສັນຍາ CPS04-2026-RM-PM16-NR04, ຕາມເສັ້ນທາງເລກທີ 16 ແຕ່ຂົວຂ້າມນ້ຳຂອງ ນະຄອນປາກເຊ-ບ້ານຫຼັກ 10 ເມືອງບາຈຽງຈະເລີນສຸກ (ກມ 0+000-ກມ 9+300) ແລະ ອານະໄມຂົວຂ້າມນ້ຳຂອງ.

1.5- ສັນຍາ CPS05-2026-RM-PM16-NR05, ຕາມເສັ້ນທາງເລກທີ 16 ແຕ່ບ້ານບັງລຽງ-ບ້ານໜອງສູງ ຊ/ດ ເຊກອງ ເມືອງປາກຊ່ອງ (ກມ 50+000-ກມ 78+000).



Scanned with CamScanner

1.6- ສັນຍາ CPS06-2026-RM-PM16-NR06, ຕາມເສັ້ນທາງເລກທີ 16A ແຕ່ບ້ານບັງລຽງ-ບ້ານນ້ຳຕອດ ຊ/ດ ອັດຕະປື ເມືອງປາກຊ່ອງ (ກມ 0+000-ກມ 51+000).

1.7- ສັນຍາ CPS07-2026-RM-PM16-NR07, ຕາມເສັ້ນທາງເລກທີ 20 ແຕ່ແຍກທາງເລກ 16 ບ້ານຫຼັກ 21-ບ້ານແກ້ງເກຍ ຊ/ດ ສາລະວັນ ເມືອງບາຈຽງຈະເລີນສຸກ (ກມ 0+000-ກມ 39+000).

1.8- ສັນຍາ CPS08-2026-RM-PM16-NR08, ຕາມເສັ້ນທາງເລກທີ 14 ແຕ່ແຍກທາງ16 ບ້ານຫ້ວຍເພັກ ເມືອງໂພນທອງ-ບ້ານໂພນແພງ ເມືອງຈຳປາສັກ (ກມ 0+000-ກມ 28+825).

**2.) ວຽກຍົກລະດັບ ແລະ ສ້ອມແປງທາງຫຼວງທ້ອງຖິ່ນ ປະກອບມີ 03 ໂຄງການ ຄື:**

2.1- ໂຄງການຍົກລະດັບ ແລະ ສ້ອມແປງເສັ້ນທາງ ແຕ່ແຍກທາງ 8421 - ແຄມເຊໂດນ, ບ້ານທ່າຫຼວງ, ນະຄອນປາກເຊ.

2.2- ໂຄງການຍົກລະດັບ ແລະ ສ້ອມແປງເສັ້ນທາງ ເຂົ້າບ້ານຫາດຊາຍຄູນ, ເມືອງໂຂງ.

2.3- ໂຄງການຍົກລະດັບ ແລະ ສ້ອມແປງເສັ້ນທາງ ເຂົ້າບ້ານກະດັນ ເມືອງໂຂງ.

3.) ບໍລິສັດທີ່ມີຄວາມສົນໃຈ ສາມາດຕິດຕໍ່ພົວພັນສອບຖາມຂໍ້ມູນເພີ່ມເຕີມໄດ້ ໃນໂມງລັດຖະການ ທີ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ (ຂະແໜງບໍລິຫານ-ຈັດຕັ້ງ ແລະ ຂະແໜງຂົວທາງ) ຕາມໂມງລັດຖະການ.

4.) ການປະມູນວຽກດັ່ງກ່າວນີ້ ແມ່ນອະນຸຍາດໃຫ້ທຸກໆບໍລິສັດ ທີ່ມີຄຸນວຸດທິ, ມີປະສົບການ, ມີທ່າແຮງ, ມີໃບອະນຸຍາດດຳເນີນທຸລະກິດກໍ່ສ້າງ ແລະ ສ້ອມແປງຂົວທາງ ຖືກຕ້ອງຕາມກົດໝາຍ, ຕາມເງື່ອນໄຂໃນເອກະສານການປະມູນ.

5.) ເອກະສານປະມູນ ສາມາດຊື້ໄດ້ທີ່ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ (ຂະແໜງບໍລິຫານ-ຈັດຕັ້ງ) ຕາມໂມງລັດຖະການ ເລີ່ມແຕ່ວັນທີ 24 ກໍລະກົດ 2026 ເປັນຕົ້ນໄປ ໃນລາຄາ 2,000,000 ກີບ/ໂຄງການ; ງົບປະມານທີ່ຊື້ຊອງປະມູນ ແມ່ນບໍ່ໄດ້ມີການສົ່ງຄືນ.

6.) ບໍລິສັດ ທີ່ສົນໃຈເຂົ້າຮ່ວມປະມູນ ແມ່ນຕ້ອງໄດ້ລົງກວດກາພາກສະໜາມຕົວຈິງ ດ້ວຍຕົວເອງ ຫຼື ລົງສົມທົບກັບເຈົ້າຂອງໂຄງການກໍ່ໄດ້, ເລີ່ມແຕ່ວັນທີ 06 ສິງຫາ (08) 2026 ຫາ ວັນທີ 12 ສິງຫາ (08) 2026; ຈາກນັ້ນ ຕ້ອງໄດ້ເຂົ້າກອງປະຊຸມ ກ່ອນການເປີດຊອງປະມູນ, ເຊິ່ງຈະໄດ້ຈັດຂຶ້ນ ໃນຄັ້ງວັນທີ 13 ສິງຫາ (08) 2026, ເວລາ 9:00 ໂມງ ທີ່ຫ້ອງປະຊຸມ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ.

7.) ເອກະສານປະມູນຕ້ອງສົ່ງເຖິງ ພະແນກໂຍທາທິການ ແລະ ຂົນສົ່ງ ແຂວງຈຳປາສັກ ກ່ອນເວລາ 8:40 ໂມງ ຂອງວັນທີ 26 ສິງຫາ (08) 2026, ຖ້າສົ່ງຊ້າ ຕາມເວລາທີ່ກຳນົດ ທາງຄະນະຮັບຜິດຊອບການປະມູນ ຈະບໍ່ໄດ້ພິຈາລະນາ; ເພາະຈະໄດ້ເປີດຊອງປະມູນ ໃນເວລາ 9:00 ໂມງ ຂອງວັນດຽວກັນ ໂດຍຊ້ອງໜ້າຄະນະກຳມະການປະມູນ ແລະ ຜູ້ເຂົ້າຮ່ວມປະມູນ.

8.) ບໍລິສັດເຂົ້າຮ່ວມການປະມູນ ຕ້ອງມີໜັງສືຄ້ຳປະກັນການປະມູນມາພ້ອມ ໃນມູນຄ່າບໍ່ໃຫ້ຫຼຸດ 2% ຂອງມູນຄ່າທີ່ສະເໜີເຂົ້າມາປະມູນ; ໜັງສືຄ້ຳປະກັນປະມູນ ຕ້ອງໄດ້ຢັ້ງຢືນອອກຈາກທະນາຄານ ທີ່ດຳເນີນທຸລະກິດ ຢູ່ໃນ ສ ປ ປ ລາວ ຫຼື ແຊັກເງິນ ທີ່ໄດ້ມີການຢັ້ງຢືນຈາກທະນາຄານ.

ເຊັນແທນ ຫົວໜ້າພະແນກ

ກະຊວງໂຍທາທິການ ແລະ ຂົນສົ່ງ
ພະແນກ
ໂຍທາທິການ
ແລະ ຂົນສົ່ງ
ແຂວງຈຳປາສັກ



ປອ. ປາດຖະໜາ ພອນທິບ